## 1. ເມັດພັນເຂົ້າທີ່ດີແມ່ນເມັດພັນແນວໃດ?

- ສີຂອງເມັດພັນ ເປັນສີດຽວກັນ
- ເມັດເຕັມດີແລະ ໃຫ່ຍສະເໝີ
- ບໍ່ມີເມັດພັນຊະນິດອື່ນເຈືອປົນ
- ປອດຈາກເຊື້ອພະຍາດແລະແມງໄມ້ທຳລາຍ
- ບໍ່ມີເສດຫຍ້າ, ເຟືອງ ແລະເມັດລີບປົນ
- ຄວາມງອກຕ່ຳສຸດບໍ່ຫລຸດ 80%
- ເປັນເມັດພັນທີ່ໄດ້ຈາກ ແນວພັນລົງທະບຽນແລ້ວ

## 2. ການແຊ່ ແລະ ບົ່ມເມັດພັນເຂົ້າປູກ

### 2.1. ກ່ອນແຊ່

-ຄວນຕາກ 1 ແດດ ເພື່ອກະຕຸ້ນໃຫ້ເມັດເຂົ້າ ງອກດີ ແລະຝັດເອົາເມັດລີບອອກກ່ອນ. ຫລັງຈາກນັ້ນອາດແຊ່ໃນນ້ຳອຸ່ນ (3 ຮ້ອນ 2 ເຢັນ) ປະມານ ເຄິ່ງຊົ່ວໂມງ ເພື່ອຊ່ວຍໃຫ້ງອກດີ

### 2.2. ການແຊ່ເມັດພັນ

- ເອົາເມັດພັນໃສ່ກະທໍຫລືໃສ່ເປົາປ່ານ ລົງແຊ່ ນ້ຳແລະຄົນອີກຄັ້ງນຶ່ງ ເພື່ອເອົາເມັດລີບ ອອກ ໃຫ້ໝົດ, ຄວນແຊ່ 1 ຫາ 2 ມື້ ຫລື 24 ຫາ 48 ຊົ່ວໂມງ ແລ້ວແຕ່ເມັດພັນມີເປືອກໜາ ຫລື ບາງ, ເວລາແຊ່ໄດ້ 12-24 ຊົ່ວໂມງຄວນປ່ຽນ ນ້ຳໃໝ່ ຫລືຄືນໃຫ້ນ້ຳເນົ່າເສັ່ງຈາກການແຊ່ເມັດນັ້ນ ອອກ

-ການບົ່ມ: ບົ່ມໃນ 2 ວັນ ຫລື 48 ຊົ່ວໂມງ, ເວລາບົ່ມໄດ້ 24 ຊົ່ວໂມງຄວນປີ້ນເປົາໜຶ່ງເທື່ອແລະຫົດນ້ຳເພື່ອເມັດທາງໃນບໍ່ຮ້ອນເກີນໄປ, ມີຄວາມຊຸ່ມ ແລະ ງອກ ສະເໝີດີ

- ເມື່ອສັງເກດຈາວອອກດີແລ້ວເອົາໄປ ຫ່ວານໄດ້

### 2.3. ການກຽມດິນຕົກກ້າ

- ຕ້ອງເລືອກເອົາບ່ອນທີ່ມີເງື່ອນໄຂເຊັ່ນ: ສະດວກຕໍ່ການປ່ອຍນ້ຳເຂົ້າ, ອອກ. ຫຼັງຈາກນັ້ນໄຖດິນດາກແດດໄວ້ 1 ຫາ 2 ອາທິດ ຈຶ່ງເອົານ້ຳເຂົ້າຖວ້ມແຊ່ໄວ້ປະມານ 1 ອາທິດຫຼັງຈາກຄາດດິນມຸ້ນແລ້ວຄວນຫ່ວານຝຸ່ນຄອກໃສ່ 1 ກິໂລ/ຕາ ແມັດ ແລ້ວປັບໜ້າດິນໃຫ້ພຽງ, ແລະແບ່ງເຮັດເປັນ ແປງ ຫຼື ເປັນໜານກ້ວາງແຕ່ 1.5-2 ແມັດ ຍາວສຸດ ແຕ່ຈະເໝາະສົມຂອງໄຮ່ນາແລະ ຄວນມີຮ່ອງລະບາຍ

### 2.4. ການຫວ່ານກ້າ.

- ການຫວ່ານກ້າເວລາທີ່ເໝາະສົມ ແມ່ນຕອນແລງທີ່ມີແສງແດດອ່ອນ, ຫວ່ານໃນອັດຕາແນວປູກ 100 ກຣາມ/ຕາແມັດ ຫຼື 1 ຂີດ/ຕາແມັດ ການຫວ່ານໃສ່ດິນຕົມຫຼືເໝາະສົມແມ່ນໃຫ້ເມັດເຂົ້າລົງດິນ 1/2 ຫລືເຄິ່ງເມັດ. ຫລັງຫ່ວານກ້າໄດ້ 7-10 ວັນ ຄວນເລັ່ງຝຸ່ນຢູເລັຍອັດຕາສ່ວນ 5 ກຼາມ/ຕາແມັດ ໃນເວລາຕົ້ນກ້າບໍ່ງາມ ແຕ່ຄວນລະວັງບໍ່ໃຫ້ກ້າອື້ວຍ້ອນຝຸ່ນຫລາຍ ເກີນໄປ ແລະ ບໍ່ຄວນຫ່ວານຝຸ່ນຊ້າເພາະຈະເຮັດໃຫ້ຮາກຍາວ ແລະ ຫລົກຍາກ. ອາຍຸກ້າໄດ້ 25 ວັນແມ່ນພໍດີເພື່ອນຳໄປປັກດຳໄດ້.

### 2.4. ກຽມດິນປັກດຳ

**- ໄຖເທື່ອທີ່ 1ແຊ່ໄວ້ 2-4 ອາທິດ,ໄຖເທື່ອ 2 ກ່ອນປັກດຳ 1 ອາທິດ, ຈາກນັ້ນຄາດໃຫ້ລະອຽດແລະປັບໜ້າ ດິນໃຫ້ພຽງເພື່ອປັກດຳ**

**- ເຮັດແປງປັກດຳກ້ວາງ 5 ແມັດ, ໄລຍະຫ່າງແປງ/ແປງ 30 ຊມ ເພື່ອການບົວລະບັດໄດ້ງ່າຍ**

## 3. ການປັກດຳ

**- ການປັກດຳບໍ່ຄວນດຳລົງເລິກຫຼາຍປະມານ 2 ຂໍ້ມື**

**- ລະດັບນ້ຳປັກດຳບໍ່ໃຫ້ຫຼາຍ, ພຽງແຕ່ 2-5 ຊມ**

**- ໄລຍະຫ່າງ: 20 x 20 ຊມ ໃນດິນບໍ່ງາມ**

ແລະຄວນຫ່າງ ກວ່ານີ້ໃນນາທີ່ມີດິນງາມ, 20 - 25 ສຸມ/ຕາແມັດ ແລະປັກດຳ 2-3 ກົບ/ສຸມ

- ການປັກດຳຕ້ອງດຳເປັນແຖວ

4. ການບົວລະບັດຮັກສາ

- ອັດຕາຝຸ່ນໃນ 1 ເຮັກຕາປະມານ 60:30:30

- ຮອງພື້ນປະກອບມີ ຝຸ່ນຄອກ 5 ໂຕນ ຫລື 0.5 ກິໂລ/ຕາແມັດ, 200-500 ກິໂລ ປູນຂາວ ແລະ 15:15:15 ປະມານ 200 ກິໂລ/ຮຕ ຫລື 1 ກິໂລ/50 ຕາແມັດ (ຖ້າມີເງື່ອນໄຂ)

+ ເລ່ງຄັ້ງທີ່ 1: ຫັລງປັກດຳໄດ້ 20-25 ວັນ, ໃສ່ຝຸ່ນຢູເລັຍ 33 ກິໂລ/ເຮັກຕາ ຫລື 1 ກິໂລ/300 ຕາແມັດ

+ ເລ່ງຄັ້ງທີ່ 2: ຫັລງປັກດຳໄດ້ 40-45 ວັນ, ໃສ່ຝຸ່ນຢູເລັຍ 33 ກິໂລ/ເຮັກຕາ. ກ່ອນເລັ່ງຝຸ່ນຕ້ອງເສັຍຫ້ຍາ ແລະຄວນໃຫ້ນ້ຳເລິກປະມານ 5-10 ຊມ

5. ວິທີການເກັບກ່ຽວ.

ການເກັບກ່ຽວຈະນິຍົມໃຊ້ແຮງງານຄົນ ຫລື ໃຊ້ກົນຈັກຊ່ວຍກໍໄດ້ເພື່ອຄວາມວ່ອງໄວ ແຕ່ຄວນຫລີກລ້ຽງຝົນຮຳ.

*ສິ່ງທີ່ຄວນເອົາໃຈໃສ່*

- **ກ່ອນການເກັບກ່ຽວເຂົ້າເພື່ອບໍລິໂພກ** ຕ້ອງເກັບກ່ຽວເຂົ້າໃນໄລຍະທີ່ ເໝາະສົມຄື 25-28 ວັນຫຼັງການອອກດອກ ຫຼືເມື່ອສັງເກດ ເຫັນເຂົ້າສຸກແກ່ໃນຮວງປະມານ 85%, ກ່ອນເກັບກ່ຽວ 1 ອາທິດ ຄວນລະບາຍນ້ຳອອກ ເພື່ອເຮັດໃຫ້ເຂົ້າສຸກແກ່ສະໝ່ຳສະເໝີແລະສະດວກເວລາເກັບກ່ຽວ, ຄວນຕາກເຂົ້າໃນທົ່ງນາປະມານ 1-2 ແດດ **ແລ້ວກູ້ເພື່ອບໍ່ໃຫ້ຝົນຕົກຮຳ**

6. **ການຟາດເມັດພັນເຂົ້າແລະເກັບມ້ຽນ**

ການຟາດເຂົ້າເປັນວຽກທີ່ຕໍ່ເນື່ອງອາດຈະໄຊ້ແຮງງານຄົນ ຫຼື ໃຊ້ເຄື່ອງກົນຈັກ ເຂົ້າຊ່ວຍກໍ່ໄດ້ທັງນີ້ ກໍ່ຂື້ນຢູ່ກັບປະລິມານຂອງເຂົ້າທີ່ຜະລິດ, ຫລັງຈາກນັ້ນຄວນເກັບຮັກສາໃນ ເປົາປ່ານ ຫລື ພາສະນະທີ່ສະອາດ **ແລ້ວເກັບຮັກສາໃນ ເລົ້າ ສາງທີ່ອາກາດລ່ວງດີ**

| ຊື່ແນວພັນ | ອາຍຸ | ຄວາມສູງ |
|---|---|---|
| ທ່າດອກຄຳ1 | 135-140 | ປານກາງ |
| ທ່າດອກຄຳ8 | 135-140 | ປານກາງ |
| ທ່າດອກຄຳ11 | 135-140 | ປານກາງ |

ກະຊວງກະສິກຳ ແລະ ປ່າໄມ້

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

# ຄູ່ມືການປູກເຂົ້າທີ່ຖືກວິທີ ໃນໝູ່ ຊາວນາ



ໂຄງການປັບປຸງ ລະບົບ

ການຂະຫຍາຍ ແລະ ແຈກຢາຍເມັດພັນເຂົ້າ

ໂທ: 0305261646

ເດືອນ11 ປີ 2007